# ຜົນການຕັດສິນຜູ້ຄຸ້ມຄອງທຶນຊ່ວຍເຫຼືອຈາກ GPE

**ນຳສະເໜີ ໂດຍ: ກົມແຜນການ**

# ຂະບວນການຄົ້ນຄວ້າຜົນການຕັດສິນ

- ໃນວັນທີ 1 ເດືອນ ກໍລະກົດ 2024 ໄດ້ນໍາສະເໜີຜົນການຕັດສິນຂອງຄະນະກໍາມະການ ແລະ ຜົນຜົນການຮັບຮອງຂອງລັດຖະມົນຕີ ສສກ ຢູ່ທີ່ກອງປະຊຸມໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ, ແຕ່ກອງປະຊຸມ ບໍ່ສາມາດຮັບຮອງຜົນການຕັດສິນໄດ້.
- ເນື່ອງຈາກວ່າ ໃນວັນທີ 25 ເດືອນ ມິຖຸນາ ອົງການອຸຍນິເຊັບ ໄດ້ຂຽນຈົດໝາຍໄປຫາ ອົງການ GPE ເພື່ອຊັກຖາມເຖິງຂະບວນການ ແລະ ຄວາມໂປ່ງໃສຂອງການຄັດເລືອກ ຂອງຄະນະກໍາມະການ. (ມີເອກະສານ)
- ວັນທີ 7 ສິງຫາ 2024 ທາງອົງການ GPE ໄດ້ສົ່ງໜັງສືແຈ້ງຕອບ, ພ້ອມທັງໄດ້ ອະທິບາຍເຖິງຂະບວນການທີ່ ຄະນະກໍາມະການຄັດເລືອກ ໄດ້ດໍາເນີນການຕ່າງໆ ຕາມຂໍ້ຊັກຖາມ ຂອງອົງການອຸຍນິເຊັບ  ແລະ ໄດ້ຕົກລົງຮັບຮອງເອົາຜົນການຕັດສິນຕາມ ການສະເໜີຂອງຄະນະກໍາມະການ ແລະ ຜົນການຮັບຮອງຂອງທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ (ມີເອກະສານ)

- ຫຼັງຈາກໄດ້ຮັບໜັງສືແຈ້ງຕອບຈາກອົງການ GPE ວັນທີ 13 ສິງຫາ ກົມແຜນການໄດ້ເຮັດໜັງສືລາຍງານທ່ານ ລັດຖະມົນຕີ ຕໍ່ກັບຜົນການຕັດສິນຂອງ ອົງການ GPE ເພື່ອຂໍທິດຊີ້ນໍາ
- ວັນທີ 20 ສິງຫາ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໄດ້ເຮັດໜັງສືລາຍງານຜົນການຕັດສິນດັ່ງກ່າວ ຕໍ່ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການຕ່າງປະເທດ ແລະ ລາຍງານທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ
- ວັນທີ 28 ສິງຫາ ກະຊວງການຕ່າງປະເທດ ໄດ້ແຈ້ງຕອບກະຊວງສຶກສາທິການ ແລະ ກິລາ ໂດຍ ມອບໃຫ້ ກະຊວງສຶກສາທິການ ແລະ ກິລາ ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າ ເພື່ອໃຫ້ສອດຄ່ອງກັບລະບຽບການ
- ວັນທີ 2 ກັນຍາ ກົມແຜນການ ສສກ ໄດ້ປະຊຸມຮ່ວມກັນກັບ ກົມຮ່ວມມືສາກົນຂອງ ກະຊວງແຜນການ ເພື່ອຄົ້ນຄວ້າ ຜົນການຕັດສິນຕາມໜັງສືແຈ້ງຕອບຂອງ GPE ແລະ ເນື້ອໃນບົດລາຍງານຂອງທ່ານລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ.

- ວັນທີ 9 ກັນຍາ ກົມຮ່ວມມືສາກົນ ໄດ້ເຮັດໜັງສືລາຍງານເຖິງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໂດຍໄດ້ ລະບຸເນື້ອໃນດັ່ງນີ້:
  - ຜ່ານການປຶກສາຫາລື ລະຫວ່າງກົມຮ່ວມມືສາກົນ, ກຜທ, ກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ແລະ ກົມແຜນການ ກະຊວງສຶກສາທິການ ແລະ ກິລາ ເຫັນວ່າ ຖ້າແກ່ຍາວໃນຂະບວນການດັ່ງກ່າວ ຈະເຮັດໃຫ້ທຶນ ຊ່ວຍເຫຼືອດັ່ງກ່າວອາດຈະຕົກໄປ, ດັ່ງນັ້ນ ຈຶ່ງເຫັນສົມຄວນຮັບຮອງເອົາຜົນການຄັດເລືອກ ໃຫ້ UNICEF ຄຸ້ມຄອງ ທຶນ SCG ມູນຄ່າ 2,6 ລ້ານໂດລາ ແລະ ອົງການ SCI ເປັນຜູ້ຄຸ້ມຄອງທຶນ STG ມູນຄ່າ 10 ລ້ານ ໂດລາ ຕາມ ການຢັ້ງຢືນຂອງ ກະຊວງສຶກສາທິການ ແລະ ກິລາ
- ວັນທີ 16 ກັນຍາ ທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໄດ້ອອກໜັງສືທາງການ ແຈ້ງຕອບກະຊວງສຶກ ສາທິການ ແລະ ກິລາ ກ່ຽວກັບຜົນການຕັດສິນ ໂດຍເຫັນດີຮັບຮອງເອົາຕາມການຢັ້ງຢືນຂອງ ກະຊວງສຶກສາທິການ ແລະ ກິລາ.

ຂອບໃຈ